ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------

ສຳນັກງານນາຍົກລັດຖະມົນຕີ

ເລກທີ 370/ສນຍ

ນະຄອນຫຼວງວຽງຈັນ, ວັນທີ 23.08.2010

# ດຳລັດ
## ວ່າດ້ວຍການພິມຄຳເຕືອນກ່ຽວກັບສຸຂະພາບ ໃສ່ວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບ

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສ.ປ.ປ.ລາວ ສະບັບປັບປຸງ ເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍການອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ສະບັບເລກທີ 01/ສພຊ, ລົງວັນທີ 10 ເມສາ 2001;
- ອີງຕາມ ກົດໝາຍວ່າດ້ວຍການຄວບຄຸມຢາສູບ ສະບັບເລກທີ 07/ສພຊ, ລົງວັນທີ 26 ພະຈິກ 2009;
- ອີງຕາມການສະເໜີຂອງລັດຖະມົນຕີວ່າການ ກະຊວງສາທາລະນະສຸກ ສະບັບເລກທີ 584/ກຊສ, ລົງວັນທີ 30 ກໍລະກົດ 2010.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ເພື່ອຄວບຄຸມ, ຕິດຕາມ, ກວດກາ ການພິມຄຳເຕືອນກ່ຽວກັບສຸຂະພາບ ໃສ່ວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບທີ່ເປັນຂໍ້ຄວາມຕົວໜັງສື ທີ່ສະແດງເຖິງ ຄວາມເປັນອັນຕະລາຍຕໍ່ສຸຂະພາບຂອງຜະລິດຕະພັນຢາສູບ, ເພີ່ມຄວາມຢາກເຊົາສູບຢາ ແລະ ບໍ່ເລີ່ມຕົ້ນສູບຢາ ແນໃສ່ປົກປ້ອງ ແລະ ສົ່ງເສີມສຸຂະພາບຂອງປະຊາຊົນບັນດາເຜົ່າໃຫ້ແຂງແຮງ, ປະຫຍັດການໃຊ້ຈ່າຍທີ່ບໍ່ມີປະໂຫຍດ, ປະກອບສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດ.

ມາດຕາ 2. **ຄຳເຕືອນກ່ຽວກັບສຸຂະພາບ**

ຄຳເຕືອນກ່ຽວກັບສຸຂະພາບ ແມ່ນບັນດາຂໍ້ຄວາມເປັນຕົວໜັງສື ທີ່ພິມໃສ່ວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບ ເພື່ອເຕືອນໃຫ້ຜູ້ບໍລິໂພກຢາສູບຮັບຮູ້ວ່າ ຜະລິດຕະພັນເຫຼົ່ານັ້ນເປັນອັນຕະລາຍແກ່ສຸຂະພາບຂອງຕົນ ແລະ ຜູ້ອື່ນ.

ມາດຕາ 3. **ຄວາມໝາຍຂອງຄຳສັບ**

ຄຳສັບທີ່ໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້ :

1. **ຜະລິດຕະພັນຢາສູບ** ໝາຍເຖິງ ຜະລິດຕະພັນທີ່ເຮັດມາຈາກໃບຢາສູບ ເປັນວັດຖຸດິບທັງໝົດ ຫລື ບາງສ່ວນ, ຜະລິດຂຶ້ນເພື່ອຮັບໃຊ້ ສູບ, ດົມ, ຄ້ຽວ.
2. **ວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບ** ໝາຍເຖິງ ຊອງ, ຕຸດ, ຫີບ ແລະ ສິ່ງອື່ນໆ ທີ່ໃຊ້ຫຸ້ມຫໍ່ຜະລິດຕະພັນຢາສູບ.
3. **ອຸດສາຫະກຳຢາສູບ** ໝາຍເຖິງ ໂຮງງານຜະລິດ, ຜູ້ນຳເຂົ້າ ແລະ ຫລື ຕົວແທນຈຳໜ່າຍຜະລິດຕະພັນຢາສູບ.

ມາດຕາ 4. **ຫຼັກການໃນການພິມຄຳເຕືອນ**

ຫຼັກການໃນການພິມຄຳເຕືອນກ່ຽວກັບສຸຂະພາບໃສ່ວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບມີດີ :

1. ຜະລິດຕະພັນຢາສູບທີ່ຈຳໜ່າຍຢູ່ ສ.ປ.ປ.ລາວ ຕ້ອງພິມຄຳເຕືອນກ່ຽວກັບສຸຂະພາບດ້ວຍຂໍ້ຄວາມຕົວໜັງສືເປັນພາສາລາວ ແລະ ເປັນພາສາອັງກິດ;
2. ການພິມຄຳເຕືອນກ່ຽວກັບສຸຂະພາບໃສ່ວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບ ຕ້ອງປະຕິບັດຕາມການກຳນົດຂອງກະຊວງສາທາລະນະສຸກ;
3. ຮັບປະກັນສິດໃນການໄດ້ຮັບຂໍ້ມູນຂ່າວສານກ່ຽວກັບ ຄວາມເປັນອັນຕະລາຍຕໍ່ສຸຂະພາບທີ່ເກີດຈາກການຊົມໃຊ້ຢາສູບ ແລະ ການສູດດົມເອົາຄວັນຢາສູບຂອງປະຊາຊົນທຸກຄົນ.

ມາດຕາ 5. **ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ບັງຄັບສຳລັບຜະລິດຕະພັນຢາສູບສຳເລັດຮູບ ຊຶ່ງຜະລິດແບບອຸດສາຫະກຳທີ່ຈຳໜ່າຍ ໃນ ສ.ປ.ປ.ລາວ, ລວມທັງຜູ້ຜະລິດພາຍໃນ ແລະ ຜູ້ນຳເຂົ້າຈາກຕ່າງປະເທດ.

ມາດຕາ 6. **ການພົວພັນ ແລະ ການຮ່ວມມືສາກົນ**

ລັດເປີດກວ້າງ ແລະ ສົ່ງເສີມການພົວພັນ, ຮ່ວມມືກັບສາກົນ ໃນການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກນິກ, ເຕັກໂນໂລຢີ ໃນວຽກງານຄວບຄຸມການພິມຄຳເຕືອນກ່ຽວກັບສຸຂະພາບ ໃສ່ວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບ, ປະຕິບັດຕາມພັນທະພາຍໃຕ້ສົນທິສັນຍາສາກົນກ່ຽວກັບ ການຄວບຄຸມຢາສູບທີ່ ສ.ປ.ປ.ລາວ ໄດ້ລົງນາມ ແລະ ເປັນພາຄີ.

## ໝວດທີ II
## ການພິມຄຳເຕືອນ

### ມາດຕາ 7. ການຄວບຄຸມການພິມຄຳເຕືອນ

ຜະລິດຕະພັນຢາສູບທີ່ຜະລິດຢູ່ພາຍໃນປະເທດ ແລະ ນຳເຂົ້າມາຈາກຕ່າງປະເທດ ເພື່ອຈຳໜ່າຍໃນສ.ປ.ປ.ລາວ ຕ້ອງໄດ້ພິມຄຳເຕືອນກ່ຽວກັບສຸຂະພາບໃຫ້ຖືກຕ້ອງຕາມຫຼັກການ, ວິທີການ ແລະ ເງື່ອນໄຂໃນການພິມ ຄຳເຕືອນທີ່ໄດ້ກຳນົດໄວ້ ໃນໝວດທີ II ຂອງດຳລັດສະບັບນີ້.

### ມາດຕາ 8. ການພິມຄຳເຕືອນ

**ການພິມຄຳເຕືອນກ່ຽວກັບສຸຂະພາບຕ້ອງປະຕິບັດ ດັ່ງນີ້ :**

1. ຕ້ອງພິມຂໍ້ຄວາມຄຳເຕືອນກ່ຽວກັບສຸຂະພາບຕາມການກຳນົດ ຂອງກະຊວງສາທາລະນະສຸກ.

2. ຄຳເຕືອນກ່ຽວກັບສຸຂະພາບຕາມທີ່ກຳນົດໄວ້ໃນຂໍ້ທີ 1 ຂອງມາດຕານີ້ ມີ 6 ແບບ ຄືດັ່ງນີ້ :

- ຄວັນຢາສູບພາໃຫ້ເປັນມະເຮັງປອດ;
- ສູບຢາພາໃຫ້ເສັ້ນເລືອດລ້ຽງຫົວໃຈຕີບຕັນ;
- ສູບຢາເຮັດໃຫ້ເສັ້ນເລືອດສະໝອງແຕກ;
- ສູບຢາເຮັດໃຫ້ເປັນມະເຮັງປາກ;
- ຄວັນຢາສູບຂ້າຄົນອ້ອມຂ້າງ;
- ສູບຢາພາໃຫ້ແຂ້ວດຳ - ປາກເໝັນ.

3. ການຈັດພິມຄຳເຕືອນກ່ຽວກັບສຸຂະພາບຕ້ອງໝູນວຽນ ແຕ່ລະແບບໃນທຸກໆ 500,000 (ຫ້າແສນ) ຊອງ ຈົນຄົບຈຳນວນ 6 ຮູບແບບ.

4. ນອກຈາກ 6 ແບບນີ້ແລ້ວ ກະຊວງສາທາລະນະສຸກ ສາມາດກຳນົດຄຳເຕືອນ ກ່ຽວກັບສຸຂະພາບໃໝ່ໄດ້ ໃນທຸກໆ 2 ປີ ຕາມຜົນການຄົ້ນຄວ້າທາງດ້ານວິຊາການແຕ່ລະໄລຍະ, ດັ່ງລະບຸໄວ້ໃນມາດຕາ 10 ລຸ່ມນີ້.

5. ຄຳເຕືອນກ່ຽວກັບສຸຂະພາບ ຕ້ອງກວມ 30% ຂອງດ້ານໜ້າ ແລະ ດ້ານຫຼັງ, ເບື້ອງລຸ່ມຂອງວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບ.

### ມາດຕາ 9. ການດຳເນີນການພິມຄຳເຕືອນ

ຜູ້ຜະລິດ ຫຼື ຜູ້ນຳເຂົ້າຜະລິດຕະພັນຢາສູບເພື່ອຈຳໜ່າຍຢູ່ ສ.ປ.ປ.ລາວ ຕ້ອງດຳເນີນການຈັດພິມຄຳເຕືອນ ກ່ຽວກັບສຸຂະພາບໃສ່ວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບຈາກຕົ້ນແບບທີ່ຈັດໃຫ້ໂດຍ ກະຊວງສາທາລະນະສຸກ ເທົ່ານັ້ນ, ທັງນີ້ກໍ່ເພື່ອໃຫ້ຂະໜາດ, ຕຳແໜ່ງຂອງຕົວອັກສອນ ແລະ ຂໍ້ຄວາມຄຳເຕືອນຕ້ອງຄືກັນກັບຕົ້ນແບບ. ຜູ້ຜະລິດ, ຜູ້ນຳເຂົ້າ ຕ້ອງປະຕິບັດພາຍໃນ 12 ເດືອນ ແລະ ຜູ້ຈຳໜ່າຍຕ້ອງ

ຂາຍຜະລິດຕະພັນທີ່ບໍ່ມີຄຳເຕືອນພາຍໃນ 15 ເດືອນ ນັບແຕ່ມື້ປະກາດໃຊ້ຂໍ້ບັງຄັບໂດຍ ກະຊວງສາທາລະນະສຸກ ເປັນຕົ້ນໄປ.

**ມາດຕາ 10. ອາຍຸຂອງຄຳເຕືອນສຸຂະພາບ**

ເນື້ອໃນຄຳເຕືອນກ່ຽວກັບສຸຂະພາບແຕ່ລະຊະນິດ ທີ່ພິມໃສ່ວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບ ມີອາຍຸການນຳໃຊ້ 2 ປີ, ເຊິ່ງກະຊວງສາທາລະນະສຸກ ເປັນຜູ້ພິຈາລະນາເນື້ອໃນຂອງຄຳເຕືອນດັ່ງກ່າວ ເປັນແຕ່ລະໄລຍະ.

## ໝວດທີ III
## ພັນທະ ແລະຂໍ້ຫ້າມໃນການພິມຄຳເຕືອນ

**ມາດຕາ 11. ພັນທະໃນການພິມຄຳເຕືອນ**

ບັນດາອຸດສາຫະກຳຢາສູບ ທີ່ຖືກສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍຂອງ ສ.ປ.ປ.ລາວ ຕ້ອງປະຕິບັດພັນທະຂອງຕົນດັ່ງນີ້ :

1. ພິມຄຳເຕືອນກ່ຽວກັບສຸຂະພາບໃສ່ວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບທີ່ຕົນຜະລິດ ແລະ ນຳເຂົ້າເພື່ອຈຸດປະສົງນຳມາຈຳໜ່າຍໃນ ສ.ປ.ປ.ລາວ ຕາມເນື້ອໃນ ແລະ ຮູບແບບທີ່ໄດ້ກຳນົດໄວ້ໃນໝວດ II ຂອງດຳລັດສະບັບນີ້.

2. ຄຸ້ມຄອງ, ຕິດຕາມ ແລະ ກວດກາການພິມຄຳເຕືອນກ່ຽວກັບສຸຂະພາບໃສ່ວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບ ຂອງຕົນຕາມການກຳນົດຂອງດຳລັດສະບັບນີ້.

**ມາດຕາ 12. ຂໍ້ຫ້າມ**

1. ຫ້າມບຸກຄົນ, ນິຕິບຸກຄົນ ຈຳໜ່າຍຜະລິດຕະພັນຢາສູບ ທີ່ບໍ່ໄດ້ພິມຄຳເຕືອນກ່ຽວກັບສຸຂະພາບຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

2. ຫ້າມອຸດສາຫະກຳຢາສູບທີ່ດຳເນີນທຸລະກິດຢູ່ໃນ ສ.ປ.ປ.ລາວ ພິມຂໍ້ຄວາມທີ່ເປັນລັກສະນະຫຼອກລວງ ທີ່ເຮັດໃຫ້ຜູ້ຊົມໃຊ້ຢາສູບເຂົ້າໃຈຜິດວ່າ ຜະລິດຕະພັນຢາສູບນີ້ ເປັນອັນຕະລາຍຕໍ່ສຸຂະ ພາບ ແລະ ມີລະດັບສານພິດ ໜ້ອຍກ່ວາຜະລິດຕະພັນຢາສູບຊະນິດອື່ນເຊັ່ນ: ອ່ອນ (Mild), ກາງ (Medium), ຈືດ (Light), ຈືດທີ່ສຸດ (Ultralight), ສານທາຣ໌ຕ່ຳ (Low tar) ຫຼື ຂໍ້ຄວາມ ຫຼື ສັນຍາລັກທີ່ມີຄວາມໝາຍຄ້າຍຄືກັນໃສ່ວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບ.

3. ຫ້າມອຸດສາຫະກຳຢາສູບພິມເນື້ອໃນ ຄຳເຕືອນກ່ຽວກັບສຸຂະພາບໃສ່ວັດຖຸຫຸ້ມຫໍ່ຜະລິດຕະພັນໂດຍບໍ່ໄດ້ຮັບການເຫັນດີຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງ.

4. ຫ້າມນຳເຂົ້າ, ຜະລິດ ແລະ ຈຳໜ່າຍຢາສູບທີ່ພິມຄຳໂຄສະນາວ່າ ມີຣົດຊາດ ແລະ ກິ່ນ ຕ່າງໆ ເຊັ່ນ: ໝາກໄມ້, ສະຕໍເບີຣີ ແລະ ອື່ນໆ, ຍົກເວັ້ນມິນທອນ.

## ໝວດ ທີ IV
## ການຄຸ້ມຄອງ ແລະ ການກວດກາການພິມຄໍາເຕືອນ

### ມາດຕາ 13. ອົງການຄຸ້ມຄອງ ແລະ ກວດກາ

ອົງການຄຸ້ມຄອງ ແລະ ກວດກາການພິມຄໍາເຕືອນກ່ຽວກັບສຸຂະພາບ ປະກອບດ້ວຍ:

1. ຂັ້ນສູນກາງ: - ກະຊວງສາທາລະນະສຸກ;
   - ກະຊວງອຸດສາຫະກໍາ ແລະ ການຄ້າ;
   - ກະຊວງການເງິນ.
2. ຂັ້ນທ້ອງຖິ່ນ: - ພະແນກສາທາລະນະສຸກແຂວງ, ນະຄອນ, ຫ້ອງການສາທາລະນະສຸກເມືອງ, ເທດສະບານ;
   - ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນ, ແລະ ຫ້ອງການ ອຸດສາຫະກໍາ ແລະ ການຄ້າເມືອງ, ເທດສະບານ;
   - ພະແນກການເງິນແຂວງ, ນະຄອນ ແລະ ຫ້ອງການການເງິນເມືອງ, ເທດສະບານ

### ມາດຕາ 14. ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງ ແລະ ກວດກາຂັ້ນສູນກາງ

ອົງການຄຸ້ມຄອງ ແລະ ກວດກາການພິມຄໍາເຕືອນກ່ຽວກັບສຸຂະພາບຂັ້ນສູນກາງມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄ້ວາ, ພິຈາລະນາ ແລະ ກໍານົດເນື້ອໃນຄໍາເຕືອນກ່ຽວກັບສຸຂະພາບ ໃຫ້ແທດເໝາະກັບສະພາບຕົວຈິງຂອງປະເທດ, ພາກພື້ນ ແລະ ສາກົນ ໃຫ້ຖືກຕ້ອງຕາມຫລັກວິທະຍາສາດການແພດໃນແຕ່ລະໄລຍະ;
2. ພິຈາລະນາ ແລະ ອະນຸມັດຄໍາສະເໜີຂອງອຸດສາຫະກໍາຢາສູບ ກ່ຽວກັບການພິມຄໍາເຕືອນກ່ຽວກັບສຸຂະ ພາບ;
3. ຊຸກຍູ້, ຕິດຕາມ ແລະ ກວດກາບັນດາອຸດສາຫະກໍາຢາສູບ (ໂຮງງານ, ບໍລິສັດນໍາເຂົ້າ ແລະ ຈໍາໜ່າຍຜະລິດຕະພັນຢາສູບ) ໃນການຈັດຕັ້ງປະຕິບັດການພິມຄໍາເຕືອນກ່ຽວກັບສຸຂະພາບ;
4. ຄົ້ນຄ້ວາ, ພິຈາລະນາ ແລະ ສະເໜີລັດຖະບານຍ້ອງຍໍຕໍ່ຜູ້ທີ່ມີຜົນງານ ຫຼື ປະຕິບັດມາດຕະການຕໍ່ຜູ້ລະເມີດດໍາລັດສະບັບນີ້ ຕາມແຕ່ລະກໍລະນີ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

### ມາດຕາ 15. ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງ ແລະ ກວດກາຂັ້ນທ້ອງຖິ່ນ

ອົງການຄຸ້ມຄອງ ແລະ ກວດກາການພິມຄໍາເຕືອນກ່ຽວກັບສຸຂະພາບຂັ້ນທ້ອງຖິ່ນມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄ້ວາ ແລະ ພິຈາລະນາຄຳສະເໜີຂອງອຸດສາຫະກຳຢາສູບ ທີ່ນອນຢູ່ໃນການຄຸ້ມຄອງຂອງຕົນໃນການພິມຄຳເຕືອນກ່ຽວກັບສຸຂະພາບ ແລ້ວນຳສົ່ງໃຫ້ອົງການຄຸ້ມຄອງ ແລະ ກວດກາການພິມຄຳເຕືອນກ່ຽວກັບສຸຂະພາບຂັ້ນສູນກາງພິຈາລະນາອະນຸມັດ;

2. ຕິດຕາມ ແລະ ກວດກາການພິມຄຳເຕືອນກ່ຽວກັບສຸຂະພາບ ໃສ່ວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບທີ່ນຳເຂົ້າ ແລະ ຈຳໜ່າຍຕາມສະຖານທີ່ຕ່າງໆ ໃນຂອບເຂດທ້ອງຖິ່ນ ທີ່ຕົນຮັບຜິດຊອບ;

3. ປະສານສົມທົບກັບຂະແໜງການ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງອື່ນໆ ໃນການປະຕິບັດມາດຕະການຕໍ່ຜູ້ລະເມີດດຳລັດສະບັບນີ້;

4. ລາຍງານສະພາບການ ໃນການພິມຄຳເຕືອນກ່ຽວກັບສຸຂະພາບ ແລະ ບັນຫາອື່ນໆທີ່ກ່ຽວຂ້ອງຕາມສາຍການຈັດຕັ້ງຂອງຕົນ;

5. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ V
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 16. ນະໂຍບາຍຕໍ່ຜູ້ທີ່ມີຜົນງານ

ບຸກຄົນ, ນິຕິບຸກຄົນໃດ ຫລືອຸດສາຫະກຳຢາສູບໃດ ທີ່ໄດ້ຈັດຕັ້ງປະຕິບັດຖືກຕ້ອງຕາມດຳລັດສະບັບນີ້ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຕາມຄວາມເໝາະສົມ.

### ມາດຕາ 17. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນໃດ ຫລື ອຸດສາຫະກຳຢາສູບໃດ ຫາກໄດ້ລະເມີດຕໍ່ຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 12 ຂອງດຳລັດສະບັບນີ້ ຈະຖືກປະຕິບັດມາດຕະການ ດັ່ງຕໍ່ໄປນີ້:

- ຄັ້ງທີ 1: ກ່າວເຕືອນ, ສຶກສາອົບຮົມ ໃຫ້ຂຽນໃບປະຕິຍານ;
- ຄັ້ງທີ 2: ອາຍັດ ແລະ ປັບໃໝ 1 ເທົ່າຕົວຂອງມູນຄ່າຜະລິດຕະພັນຢາສູບ ທີ່ຂາຍຕາມທ້ອງຕະຫລາດ ໂດຍຄິດໄລ່ຕາມຈຳນວນຜະລິດຕະພັນຢາສູບທີ່ກວດພົບຕົວຈິງ ຫລືຕາມໃບນຳສົ່ງສິນຄ້າທີ່ທາງການຮັບຮູ້;
- ຄັ້ງທີ 3: ອາຍັດ ແລະ ປັບໃໝ 3 ເທົ່າຕົວຂອງມູນຄ່າສິນຄ້າ ຕາມທີ່ກ່າວໄວ້ໃນຄັ້ງທີ 2 ເທິງນີ້;
- ຄັ້ງທີ 4: ອາຍັດ ແລະ ປັບໃໝ 5 ເທົ່າຕົວ ຂອງມູນຄ່າສິນຄ້າ ຕາມທີ່ກ່າວໄວ້ໃນຄັ້ງທີ 2 ເທິງນີ້, ພ້ອມທັງສະເໜີການຈັດຕັ້ງທີ່ມີສິດອຳນາດຖອນໃບອະນຸຍາດດຳເນີນທຸລະກິດແບບຊົ່ວຄາວ ຫລື ຖາວອນ ຕາມແຕ່ກໍລະນີເບົາ ຫລື ໜັກ.

# ໝວດທີ VI
# ບົດບັນຍັດສຸດທ້າຍ

**ມາດຕາ 18. ການຈັດຕັ້ງປະຕິບັດ**

ມອບໃຫ້ອົງການຄຸ້ມຄອງ ແລະ ກວດກາການພິມຄຳເຕືອນກ່ຽວກັບສຸຂະພາບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງດຳລັດສະບັບນີ້ ເປັນໃຈກາງປະສານສົມທົບກັບຂະແໜງການອື່ນໆ ທີ່ກ່ຽວຂ້ອງຈັດຕັ້ງ ປະຕິບັດດຳລັດສະບັບນີ້ໃຫ້ປາກົດເປັນຈິງ.

ບຸກຄົນ, ນິຕິບຸກຄົນ ແລະ ອຸດສາຫະກຳຢາສູບ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ໃຫ້ມີປະສິດທິຜົນ.

**ມາດຕາ 20. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນບັງຄັບໃຊ້ພາຍຫຼັງ 90 ວັນ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບເນື້ອໃນຂອງດຳລັດສະບັບນີ້ ລ້ວນແຕ່ຖືກລົບລ້າງ.

**ນາຍົກລັດຖະມົນຕີແຫ່ງ ສ.ປ.ປ.ລາວ**

ບົວສອນ ບຸບຜາວັນ